# ພວກເຮົາສາມາດຊ່ວຍໄດ້!

ທ່ານຫຼືໃຜຜູ້ໜຶ່ງຊຶ່ງທ່ານຮູ້ຈັກເຄີຍປະສົບກັບບັນຫາການຈຳແນກດ້ານທີ່ພັກອາໄສທີ່ຜິດກົດໝາຍ ບໍ່?

**ໂທຣສາຍດ່ວນຂອງເຮົາທີ່**

**800/424-3247 ຕໍ່ 2**

ການໂທຣແມ່ນບໍ່ເສັຽຄ່າ. ການບໍລິການບໍ່ເສັຽຄ່າ. ໃຫ້ການເຂົ້າເຖິງ TTY ແລະມີບໍລິການການແປພາສາໃຫ້ທ່ານ.

ພວກເຮົາຈະສຳພາດທ່ານແລະຮວບຮວມຂໍ້ມູນທີ່ກ່ຽວຂ້ອງ. ເມື່ອທ່ານໂທຣ, ກະຣຸນາຕຽມຂໍ້ມູນດັ່ງນີ້:

- ສະຖານທີ່ທີ່ເກີດເຫດການຈຳແນກຕໍ່ບຸກຄົນ ຊຶ່ງຜິດກົດໝາຍ
- ວັນທີທີ່ເກີດເຫດການ
- ຊື່ຂອງບຸກຄົນທີ່ກ່ຽວຂ້ອງ
- ຊື່ຂອງພະຍານໃດໆ

ພວກເຮົາຈະໃຫ້ຂໍ້ມູນກ່ຽວກັບສິດທິຂອງທ່ານ ແລະທາງເລືອກຕ່າງໆ ພາຍໃຕ້ກົດໝາຍດ້ານທີ່ພັກອາໄສທີ່ເປັນທັມ. ໃນບາງກໍລະນີ, ພວກເຮົາອາດສາມາດດຳເນີນການທົດສອບໃນບັນຫາທີ່ພັກອາໄສທີ່ເປັນທັມ ຊຶ່ງອາດຊ່ວຍໄດ້ໃນກໍລະນີຂອງທ່ານ.



ທ່ານຍັງສາມາດໂທຣໄດ້ ຖ້າຫາກ ທ່ານພຽງມີຄຳຖາມກ່ຽວກັບທີ່ພັກອາໄສທີ່ເປັນທັມ!

# ທ່ານຮູ້ບໍ່ວ່າ?

ເວັບໄຊຂອງພວກເຮົາສະເໜີຄຳຕອບຕໍ່ຄຳຖາມທີ່ຫຼາກຫຼາຍ, ລິງຄ໌, ແລະຂໍ້ມູນເພີ່ມເຕີມ. **ຢ້ຽມຊົມເວັບໄຊທີ່ www.FHCO.org**

ພວກເຮົາຈັດໃຫ້ມີການປະກວດໂປສະເຕີທຸກປີ. **ມີຂໍ້ມູນກ່ຽວກັບການເຂົ້າປະກວດທີ່ເວັບໄຊ www.FHCO.org/contest.htm**

ພວກເຮົາສະເໜີການນຳທ່ຽວສະຖານທີ່ທີ່ເຄີຍມີປະວັດການຈຳແນກຕໍ່ບຸກຄົນໃນອະດີດ. **ຮຽນຮູ້ຂໍ້ມູນຕື່ມທີ່ www.FHCO.org/tours.htm**

ພວກເຮົາຈັດງານສະແດງການເດີນທາງຊຶ່ງກ່ຽວກັບປະຫວັດຂອງເຫດການການຈຳແນກເລື້ອງທີ່ພັກອາໄສໃນຣັຖອໍຣິກອນ. **www.FHCO.org/anywhere_but_here.htm**

ພວກເຮົາຍັງສະເໜີຫ້ອງຮຽນກ່ຽວກັບທີ່ພັກອາໄສທີ່ເປັນທັມສຳລັບຜູ້ຟັງທຸກຄົນ, ແລະການບໍລິການທົດສອບດ້ວຍຕົນເອງສຳລັບຜູ້ໃຫ້ບໍລິການດ້ານທີ່ພັກອາໄສ **www.FHCO.org**

ການຊອກຫາເຮືອນຢູ່ຄືຊິເປັນຕາມ່ວນ.
ແຕ່ໃນຄວາມເປັນຈິງ, ມັນມີວຽກໃຫ້ເຮັດຫຼາຍ.

EQUAL HOUSING LENDER



EQUAL HOUSING OPPORTUNITY

ແຕ່ບໍ່ວ່າທາງໃດກໍຕາມ, ການຊອກຫາເຮືອນຢູ່ຂອງທ່ານ ບໍ່ຄວນຖືກຂັດຂວາງດ້ວຍການຖືກຈຳແນກດ້ານທີ່ພັກອາໄສທີ່ຜິດກົດໝາຍ.

ໃຫ້ຊອກເບິ່ງປ້າຍສັນຍະລັກຂ້າງເທິງ ຊຶ່ງເປັນສັນຍະລັກວ່າ ຜູ້ໃຫ້ບໍລິການທີ່ພັກອາໄສນັ້ນຮູ້ ແລະເຄົາລົບກົດໝາຍ.

ຖ້າວ່າ ສິດທິພົນລະເມືອງຂອງທ່ານໄດ້ຖືກລະເມີດໃນການດຳເນີນການດ້ານທີ່ພັກອາໄສ, ໂທຣສາຍດ່ວນທີ່ພັກອາໄສທີ່ເປັນທັມທີ່ 800/424-3247 ຕໍ່ 2 ຫຼືໄປທີ່ເວັບໄຊ www.FHCO.org ເພື່ອຮຽນຮູ້ຕື່ມ.

# ຢ່າປ່ອຍໃຫ້ການຈຳແນກດ້ານ
## ທີ່ພັກອາໄສທີ່ຜິດກົດໝາຍຂັດຂວາງທ່ານ
### ຈາກການໄດ້ເຮືອນຢູ່ທີ່ທ່ານຕ້ອງການ



## ຂໍ້ມູນສຳຄັນ
### ສຳລັບຜູ້ບໍລິໂພກດ້ານທີ່ພັກອາໄສທຸກຄົນ

ຜູ້ເຊົ່າເຮືອນ, ຜູ້ຊື້ເຮືອນ , ຜູ້ສະໝັກຂໍງິນກູ້ເຮືອນ ...

Consumer Brochure - Laotian

FAIR HOUSING COUNCIL of Oregon

www.FHCO.org
800/424-3247 ຕໍ່ 2

# ສະພາດູແລທີ່ພັກອາໄສທີ່ເປັນທັມແມ່ນຫຍັງ?

ສະພາດູແລທີ່ພັກອາໄສທີ່ເປັນທັມ (FHCO) ແມ່ນອົງກອນດູແລສິດທິພົນລະເມືອງທີ່ບໍ່ສະແຫວງຫາຜົນກຳໄລ ຊຶ່ງຮັບໃຊ້ໃນຣັຖອໍຣິກອນແລະວໍຊິງຕັນທາງຕາເວັນຕົກສຽງໃຕ້.

**ພວກເຮົາສົ່ງເສີມການເຂົ້າເຖິງທີ່ເທົ່າທຽມກັນໃນດ້ານທີ່ພັກອາໄສທີ່ສອດຄ່ອງກັບກົດໝາຍທີ່ພັກອາໄສທີ່ເປັນທັມຊຶ່ງປົກປ້ອງຕ້ານກັບການຈຳແນກທີ່ຜິດກົດໝາຍດ້ານທີ່ພັກອາໄສ.**

**ພາລະໜ້າທີ່ຂອງພວກເຮົາ:**
ເພື່ອກຳຈັດບັນຫາການຈຳແນກທີ່ຜິດກົດໝາຍດ້ານທີ່ພັກອາໄສທົ່ວຣັຖອໍຣິກອນ ແລະວໍຊິງຕັນຕາເວັນຕົກສຽງໃຕ້.

**ພວກເຮົາເຮັດພາລະໜ້າທີ່ຂອງພວກເຮົາໂດຍ:**
ໃຫ້ຄວາມຮູ້ແລະການຊ່ວຍເຫຼືອດ້ານການບັງຄັບໃຊ້ກົດລະບຽບທີ່ກ່ຽວຂ້ອງໂດຍສະເພາະຕໍ່ກົດໝາຍທີ່ພັກອາໄສທີ່ເປັນທັມ.

**ພວກເຮົາສະເໜີຂໍ້ມູນເພີ່ມເຕີມທີ່:**
www.FHCO.org/hs_consumer_info.htm,
ແລະເປັນວິທີງ່າຍໆໃນການມີສ່ວນຮ່ວມທີ່
www.FHCO.org/get_involved.

**ທ່ານຍັງສາມາດເຂົ້າຮ່ວມ** FHCO ໄດ້ ທີ່ເວັບໄຊຂອງພວກເຮົາ, ຊື້ເຄື່ອງຂອງ, ຫຼື ຈັດຕາຕະລາງເຮັດກິດຈະກຳພິເສດຊຶ່ງຊ່ວຍຫາທຶນໃຫ້ສຳລັບວຽກງານຂອງພວກເຮົາແລະເຜີຍແຜ່ຄວາມເປັນທັມຄວາມຖືກຕ້ອງໃນດ້ານທີ່ພັກອາໄສສຳລັບທຸກຄົນ.

ແຜ່ນພັບນີ້ມີໃຫ້ທ່ານໃນຮູບແບບອື່ນສຳລັບຜູ້ພິການ, ຫຼືຜູ້ທີ່ຕ້ອງການການແປພາສາ. ກະຣຸນາສອບຖາມ ຖ້າວ່າຕ້ອງການ.

ເອກະສານແປເພີ່ມເຕີມມີໃຫ້ທີ່
www.FHCO.org/translations.htm.

## ໃຜແດ່ຕ້ອງປະຕິບັດຕາມ...

...ກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມຂອງທ້ອງຖິ່ນ, ຣັຖ ແລະຣັຖບານກາງ?

**ໂດຍທົ່ວໄປແລ້ວ ທຸກຄົນຕ້ອງປະຕິບັດຕາມກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ!**

ລາຍການຂ້າງລຸ່ມນີ້ບໍ່ແມ່ນລາຍການທັງໝົດ ແຕ່ສະແດງໃຫ້ເຫັນໃນປະເດັນທີ່ວ່າ ໂດຍພື້ນຖານແລ້ວ, ທຸກຄົນຄວນຮູ້ ແລະຕ້ອງປະຕິບັດຕາມກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ.

**ຕໍ່ໄປນີ້ແມ່ນ "ຜູ້ໃຫ້ບໍລິການທີ່ພັກອາໄສ" ຊຶ່ງເຂົາເຈົ້າ ຕ້ອງຜູກມັດໂດຍກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ:**

- ເຈົ້າຂອງທີ່ດິນແລະຜູ້ຈັດການອະສັງຫາລິມະຊັບ
- ເຈົ້າຂອງແລະຜູ້ຈັດການຂໍ້ມູນຊັບສິນ
- ຜູ້ຂາຍອະສັງຫາລິມະຊັບ
- ຕົວແທນຂາຍແລະຫ້ອງການນາຍໜ້າ
- ບໍລິການຂາຍອະສັງຫາລິມະຊັບຫຼາຍແຫ່ງ
- ສະມາຄົມການຄ້າແລະອຸດສາຫະກໍາທີ່ພັກອາໄສ
- ຜູ້ສ້າງແລະນັກພັດທະນາອາຄານທີ່ພັກອາໄສ
- ສະມາຄົມຄອນໂດແລະເຈົ້າຂອງເຮືອນ
- ຜູ້ໃຫ້ກູ້ຢືມຊື້ເຮືອນແລະຜູ້ປະເມີນລາຄາ
- ບໍລິສັດປະກັນພັຍເຮືອນ
- ຊຸມຊົນທີ່ພັກອາໄສຂອງຜູ້ສູງອາຍຸທີ່ກໍານົດໃຫ້
- ສະຖານທີ່ພັກຟື້ນທີ່ມີການດູແລລະຍະຍາວ
- ເຂດອໍານາດຂອງຣັຖບານ

ລວມເຖິງ:

- ພະນັກງານໃດໆ ຫຼື ຜູ້ຮັບເໝົາໃດໆ ທີ່ເຮັດວຽກໃຫ້ແກ່ຜູ້ໃຫ້ບໍລິການດ້ານທີ່ພັກອາໄສ

ແມ້ແຕ່:

- ຜູ້ບໍລິໂພກດ້ານທີ່ພັກອາໄສ! ທ່ານແລະເພື່ອນບ້ານຂອງທ່ານຕ້ອງປະຕິບັດຕາມກົດໝາຍວ່າດ້ວຍ ທີ່ພັກອາໄສທີ່ເປັນທັມດ້ວຍ. ຍົກຕົວຢ່າງ, ເພື່ອນບ້ານຂອງທ່ານບໍ່ສາມາດລ່ວງເກີນ ຫຼື ຂົ່ມຂູ່ທ່ານອັນເນື່ອງມາຈາກເຊື້ອຊາດ, ຄວາມເຊື່ອສາສະໜາ, ອື່ນໆ.

## ສິດທິດ້ານທີ່ພັກອາໄສທີ່ເປັນທັມຂອງຂ້າພະເຈົ້າມີຫຍັງແດ່?

ກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມຫ້າມການຈໍາແນກທີ່ຜິດກົດໝາຍດ້ານທີ່ພັກອາໄສ.

ການຈໍາແນກແມ່ນຜິດກົດໝາຍໃນສະຖານະການໃດໆ ທີ່ກ່ຽວກັບທີ່ພັກອາໄສ ຖ້າວ່າມັນອີງໃສ່, ສົ່ງຜົນກະທົບໃນທາງຕໍ່ຕ້ານ, "ກຸ່ມປະເພດທີ່ໄດ້ຮັບການປົກປ້ອງ." ນັ້ນໝາຍເຖິງ, ຖ້າວ່າມີໃຜຜູ້ໜຶ່ງປະຕິເສດ ທ່ານໃນດ້ານເຮືອນຢູ່, ປະຕິບັດຕໍ່ທ່ານຢ່າງແຕກຕ່າງ, ຫຼື ລ່ວງເກີນທ່ານເນື່ອງຈາກເຫດຜົນອັນໃດໜຶ່ງທີ່ບົ່ງໄວ້ຂ້າງລຸ່ມນີ້, ແມ່ນຖືວ່າຜິດກົດໝາຍ.

ກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມແມ່ນປ່ຽນແປງໄດ້. ໃຫ້ເບິ່ງທີ່ເວັບໄຊ www.FHCO.org for updates.

## ຂ້າພະເຈົ້າຈະຮູ້ຈັກແຍກແຍະລັກສະນະຂອງການຈໍາແນກດ້ານທີ່ພັກອາໄສແນວໃດ?

ເມື່ອການຈໍາແນກແມ່ນອີງໃສ່ປະເພດທີ່ໄດ້ຮັບການປົກປ້ອງ ແລະກ່ຽວພັນກັບເລື້ອງທີ່ພັກອາໄສ, ມັນຖືວ່າຜິດກົດໝາຍ. ການຈໍາແນກນັ້ນອາດຈະແຈ້ງ ຫຼື ເລັກນ້ອຍ; ອາດແມ່ນການໄຕ່ຕອງ ຫຼື ບໍ່ເຈດຕະນາ. ແຕ່ບໍ່ວ່າທາງໃດ, ມັນຖືວ່າຜິດກົດໝາຍ.

ຢ່າງໃດກໍຕາມ, ການຈໍາແນກກໍບໍ່ແມ່ນເລື້ອງຜິດກົດໝາຍສະເໝີໄປ. ຍົກຕົວຢ່າງ, ການຫ້າມເລື້ອງສັດລ້ຽງ ແລະການສູບຢາ ບໍ່ແມ່ນປະເພດທີ່ໄດ້ຮັບການປົກປ້ອງ ສະນັ້ນກົດລະບຽບທີ່ "ຫ້າມລ້ຽງສັດ" ຫຼື "ຫ້າມສູບຢາ" ບໍ່ຖືວ່າຜິດກົດໝາຍ.



**ກຸ່ມປະເພດທີ່ໄດ້ຮັບການປົກປ້ອງໂດຍຣັຖບານກາງ:**
ເຊື້ອຊາດ, ສີຜິວ, ຊາດກໍາເນີດ
ສາສະໜາ
ເພດແລະການຂົ່ມເຫັງທາງເພດ
ສະຖານະທາງຄອບຄົວ (ເດັກອາຍຸຕໍ່າກວ່າ 18 ປີ)
ຄວາມພິການ (ທາງຮ່າງກາຍ ຫຼື ຈິດໃຈ)

**ນອກຈາກນີ້ຍັງມີການປົກປ້ອງໃນຣັຖອໍຣິກອນໃນດ້ານ:**
ສະຖານະການແຕ່ງງານ
ແຫຼ່ງລາຍໄດ້ທີ່ຖືກກົດໝາຍ
ຄວາມໂນ້ມອຽງທາງເພດ/ຕົວຕົນທາງເພດ
ຜູ້ລອດຊີວິດຈາກຄວາມຮຸນແຮງໃນຄອບຄົວ

**ນອກຈາກນີ້ ຍັງມີການປົກປ້ອງໃນຣັຖວໍຊິງຕັນໃນດ້ານ:**
ສະຖານະການແຕ່ງງານ
ຄວາມມັກຊອບທາງເພດ/ຕົວຕົນທາງເພດ
ສະຖານະທາງທະຫານ (ທະຫານຜ່ານເສິກຜູ້ມີກຽດ.)
ຜູ້ລອດຊີວິດຈາກຄວາມຮຸນແຮງໃນຄອບຄົວ

**ເຂດອໍານາດໃນທ້ອງຖິ່ນ:**
www.FHCO.org/pdfs/matrix_ore.pdf, ແລະ
www.FHCO.org/pdfs/matrix_wash.pdf.

**ສິ່ງຕໍ່ໄປນີ້, ຖ້າອີງຕາມປະເພດທີ່ໄດ້ຮັບການປົກປ້ອງ, ແມ່ນບາງຕົວຢ່າງຂອງສິ່ງທີ່ຜິດກົດໝາຍ:**

ຖືກປະຕິເສດເລື້ອງເຮືອນ.

ຖືກບອກວ່າ ເຮືອນບໍ່ຫວ່າງໃນເມື່ອມັນຫວ່າງຢູ່.

ຖືກສົ່ງໄປເຮືອນທີ່ຢູ່ໃນຂົງເຂດສະເພາະໃດໜຶ່ງ, ເຂດທີ່ມີຄວາມຊັບຊ້ອນ, ຫຼື ເຂດເພື່ອນບ້ານ.

ຖືກເກັບຄ່າໃນອັດຕາທີ່ສູງກວ່າ ຫຼື ໄດ້ຮັບຂໍ້ສະເໜີທີ່ເສັຍປຽບກວ່າຜູ້ອື່ນ.

ຖືກຂົ່ມເຫັງ ຫຼື ຂົ່ມຂູ່ ໃນເຮືອນຂອງທ່ານເນື່ອງຈາກການມີສະຖານະໃນປະເພດທີ່ໄດ້ຮັບການປົກປ້ອງ.

ຖືກປະຕິເສດຄໍາຮ້ອງຂໍທີ່ມີເຫດຜົນທີ່ກ່ຽວຂ້ອງໂດຍກົງກັບຄວາມພິການ.

ຊາວອໍຣິກອນທຸກໜຶ່ງໃນສິບຮູ້ສຶກວ່າ ເຂົາເຈົ້າໄດ້ປະສົບກັບເຫດການການຈໍາແນກທີ່ຜິດກົດໝາຍດ້ານທີ່ພັກອາໄສ.

ຢ່າປ່ອຍໃຫ້ບັນຫາການຈໍາແນກດ້ານທີ່ພັກອາໄສເປັນອຸປະສັກຕໍ່ທ່ານ. ລຸກຂຶ້ນມາໃຊ້ສິດທິຂອງທ່ານ.

**ພວກເຮົາສາມາດຊ່ວຍໄດ້!**

## ຊ່ວຍຕໍ່ສູ້ກັບບັນຫາການຈໍາແນກທີ່ຜິດກົດໝາຍດ້ານທີ່ພັກອາໄສທີ່ເປັນທັມ!

ຮຽນຮູ້ຕື່ມກ່ຽວກັບສິດທິ ແລະຄວາມຮັບຜິດຊອບຂອງທ່ານພາຍໃຕ້ກົດໝາຍຂອງຣັຖບານກາງ, ຣັຖ, ແລະທ້ອງຖິ່ນ ວ່າດ້ວຍທີ່ພັກອາໄສທີ່ເປັນທັມ!

ຮຽນຮູ້ຕື່ມທີ່: **www.FHCO.org**

ສິ່ງທີ່ຫຼາຍກວ່ານັ້ນ, ທ່ານສາມາດຊ່ວຍໄດ້. ເປັນຜູ້ທົດສອບດ້ານທີ່ພັກອາໄສທີ່ເປັນທັມ. ພວກເຮົາຕ້ອງການຄົນຄືທ່ານ!

**ຈຸດປະສົງຂອງການທົດສອບ:** ຜູ້ທົດສອບຖາມໃນຖານະຜູ້ບໍລິໂພກດ້ານທີ່ພັກອາໄສ — ເຮັດຄືເປັນ "ນັກຊ້ອປປິ້ງລັບໆ" — ເພື່ອຮວບຮວມຫຼັກຖານ. ມັນມັກເປັນວິທີທີ່ໃຊ້ໃນການພິສູດວ່າ ຜູ້ໃຫ້ບໍລິການທີ່ພັກອາໄສນັ້ນກໍາລັງລະເມີດກົດໝາຍດ້ານທີ່ພັກອາໄສທີ່ເປັນທັມຢູ່ຫຼືບໍ່.

**ຜູ້ທົດສອບໄດ້ຮັບຄ່າຈ້າງບໍ່?** ໄດ້. ຈໍານວນເງິນຈະຂຶ້ນກັບປະເພດຂອງການທົດສອບທີ່ເຮັດ. ພວກເຮົາຍັງໃຊ້ເງິນຄືນສໍາລັບຄ່ານໍ້າມັນ ແລະຄ່າໂທຣະສັບ. ຄວາມຖີ່ໃນການທົດສອບຈະຂຶ້ນກັບເວລາຫວ່າງຂອງທ່ານ ແລະປະເພດຂອງຄໍາຮ້ອງທຸກທີ່ພວກເຮົາໄດ້ຮັບ.



**ຂ້າພະເຈົ້າຈະໄດ້ຮັບການຝຶກອົບຮົມບໍ່?** ໄດ້! ຜູ້ທົດສອບຕ້ອງຮັບການຝຶກອົບຮົມໂດຍບໍ່ເສັຽຄ່າ.

**ຮຽນຮູ້ຕື່ມທີ່:**
www.FHCO.org/pdfs/TesterBrochure.pdf

ແຜ່ນພັບນີ້ໄດ້ຮັບການສະໜັບສະໜູນໂດຍ HUD Community Development Block Grant ຈາກ Oregon Business Development Department, ແລະ FHCO.

©2010. FHCO. ສະຫງວນລິຂະສິດທັງໝົດ.